## ການລົງທະບຽນ ແລະເສຍພັນທະອາກອນ, ຄ່າທຳນຽມຕ່າງໆ
## ຈາກຍານພາຫະນະ ຜ່ານລະບົບອີເລັກໂຕຣນິກ

ປະຈຸບັນກົມສ່ວຍສາອາກອນ, ກະຊວງການເງິນ ໄດ້ສຳເລັດການພັດທະນາລະບົບຄຸ້ມຄອງອາກອນ ແລະ ຄ່າທຳນຽມຈາກຍານພາຫະນະແບບທັນສະໄໝ (VETS), ເຊິ່ງຈະເລີ່ມແລ່ນທົດລອງນຳໃຊ້ຢູ່ນະຄອນຫຼວງວຽງຈັນ ເລີ່ມແຕ່ວັນທີ **16 ມິນາ 2015 ເປັນຕົ້ນໄປ.** ລະບົບດັ່ງກ່າວຈະຄຸ້ມຄອງ, ຕິດຕາມ ແລະ ກວດກາການເກັບລາຍຮັບບັນດາຄ່າທຳນຽມຈາກພາຫະນະ ໂດຍສະເພາະຄ່າທຳນຽມທາງ (ໃບວິງກົມ) ໃຫ້ມີຄວາມຮັດກຸມ, ໂປ່ງໃສ ແລະມີປະສິດທິຜົນສູງ. ກົມສ່ວຍສາອາກອນ, ກະຊວງການເງິນ ຂໍເຊີນຊວນບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ພໍ່ແມ່ພີ່ນ້ອງ ປະຊາຊົນ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ແລະສາກົນ ທີ່ເປັນເຈົ້າຂອງ ຫຼືເປັນກຳມະສິດຕໍ່ພາຫະນະທຸກປະເພດ ອີງຕາມແຈ້ງການຂອງກົມສ່ວຍສາອາກອນສະບັບເລກທີ 1783/ກງ.ກສອ, ລົງວັນທີ 17 ກຸມພາ 2015 ເລື່ອງການເສຍຄ່າທຳນຽມທາງ ສົກປີ 2015. ບັນດາທ່ານສາມາດລົງທະບຽນພາຫະນະເຂົ້າສູ່ລະບົບຂອງກະຊວງການເງິນໄດ້ຢ່າງສະດວກ ແລະວ່ອງໄວຢູ່ທີ່ ກົມສ່ວຍສາອາກອນ, ພະແນກສ່ວຍສາອາກອນປະຈຳນະຄອນຫລວງ, ຫ້ອງການສ່ວຍສາອາກອນປະຈຳເມືອງ (9 ຕົວເມືອງອ້ອມຂ້າງນະຄອນຫຼວງ), ຈຸງານອາກອນປະຈຳກອງຄຸ້ມຄອງພາຫະນະ ແລະໃບຂັບຂີ່ທົ່ງປົ່ງ, ຈຸງານອາກອນປະຈຳຕະຫລາດເຊົ້າ ຊ໋ອບປິ້ງມໍ ແລະ ສູນບໍລິການຜູ້ເສຍອາກອນ (ຖະໜົນ ໂພນໄຊ, ບ້ານໂພນໄຊ ເມືອງໄຊເສດຖາ) ລວມທັງໝົດມີ 14 ຈຸດ ພາຍໃນນະຄອນຫລວງນະຄອນຫຼວງວຽງຈັນ.

**ລາຍລະອຽດໃນການປະຕິບັດມີດັ່ງນີ້:**

- **ເປົ້າໝາຍພາຫະນະທີ່ຕ້ອງໄດ້ລົງທະບຽນຄື:** ລົດຈັກ, ລົດສາມລໍ້, ລົດເກັງ, ລົດຈິບ, ລົດກະບະ, ລົດບັນທຸກ ແລະລົດເມ ທຸກປະເພດທີ່ທ່ານມີກຳມະສິດ ແລະໄດ້ຂຶ້ນທະບຽນປ້າຍລົດນຳຂະແໜງໂຍທາທິການ ແລະຂົນສົ່ງແລ້ວ ລວມມີພາຫະນະປ້າຍ ເອກະຊົນລາວ, ອົງການຈັດຕັ້ງຂອງລັດ, ສປຊ, ສະຖານທູດ, ສງ, ທຸລະກິດ, ບຸກຄົນຕ່າງປະເທດ ແລະອື່ນໆ. ແລະພາຫະນະທີ່ຂຶ້ນທະບຽນໃໝ່ນຳກອງຄຸ້ມຄອງພາຫະນະ ແລະໃບຂັບຂີ່;

  ໝາຍເຫດ: ການລົງທະບຽນພາຫະນະເຂົ້າລະບົບແມ່ນລົງເທື່ອດຽວສະເພາະປີທຳອິດ.
- **ວັນ ແລະ ເວລາລົງທະບຽນ ແລະເສຍຄ່າທາງ:** ບັນດາທ່ານສາມາດໄປລົງທະບຽນພາຫະນະ ພ້ອມເສຍຄ່າທຳນຽມທາງປະຈຳປີ 2015 ຢູ່ນຳ 14 ຈຸດທີ່ໄດ້ກ່າວຂ້າງເທິງ, ເລີ່ມແຕ່ວັນທີ **16 ມິນາ 2015** ເປັນຕົ້ນໄປ, ວັນລັດຖະການ ຕອນເຊົ້າແຕ່ເວລາ 08:30 ໂມງ **ເຖິງ 11:30 ໂມງ** ແລະບ່າຍແຕ່ເວລາ **13:30 ໂມງ ເຖິງ 16 :00 ໂມງ**;
  - **ສະເພາະສູນບໍລິການຜູ້ເສຍອາກອນ (ໂພນໄຊ) ວັນລັດຖະການເລີ່ມແຕ່ 08:30 ໂມງ ເຖິງ 16:30 ໂມງ, (ບໍ່ພັກຕອນທ່ຽງ) ແລະ ຕອນເຊົ້າ ວັນເສົາ ເວລາ 09:00 ໂມງ ເຖິງ 11:30 ໂມງ.**
- **ເອກະສານທີ່ຈຳເປັນສຳລັບລົງທະບຽນຍານພາຫະນະ ແລະເສຍຄ່າທຳນຽມທາງ ປີ 2015 ຜ່ານລະບົບ:**
  1. **ກໍລະນີເຂົ້າໄປລົງທະບຽນ ແລະເສຍຄ່າທຳນຽມ ຢູ່ທີ່ 14 ຈຸດບໍລິການ**

ທ່ານສາມາດເຂົ້າມາພົວພັນນຳເຈົ້າໜ້າທີ່ສ່ວຍສາອາກອນໂດຍກົງເພື່ອປະກອບແບບຟອມການລົງທະບຽນ ພາຫະນະ ຂອງທ່ານເຂົ້າໃນລະບົບ ພ້ອມເສຍຄ່າທຳນຽມທາງປະຈຳປີ (ການລົງທະບຽນຍານພາຫະນະ ແມ່ນຈະລົງພຽງຄັ້ງດຽວເທົ່ານັ້ນ) ແລະທ່ານຈະໄດ້ຮັບໃບຢັ້ງຢືນການລົງທະບຽນ ແລະ ໃບຮັບເງິນ ຈາກການ ເສຍຄ່າທຳນຽມທາງປະຈຳປີ, ເອກະສານທີ່ຈຳເປັນປະກອບມີ:

- ໃບທະບຽນພາຫະນະ (ສະບັບແທ້)
- ປື້ມຕິດຕາມການຂຶ້ນທະບຽນພາຫະນະ (ປື້ມເຫລືອງສະບັບແທ້)
- ບັດປະຈຳຕົວ ຫລື ປື້ມສຳມະໂນຄົວຜູ້ເປັນເຈົ້າຂອງ ຫລືກຳມະສິດ (ສະບັບແທ້)
- ໜັງສືຜ່ານແດນ ຫລື ພາສປອດ (ກໍລະນີຄົນຕ່າງປະເທດ, ສະບັບແທ້)

**2. ກໍລະນີລົງທະບຽນລ່ວງໜ້າຜ່ານ E-Service: https://laoetax.com/**

ທ່ານຍັງສາມາດລົງທະບຽນຂໍ້ມູນຍານພາຫະນະຂອງທ່ານລ່ວງໜ້າ ຜ່ານລະບົບອິນເຕີເນັດ ກ່ອນເຂົ້າພົວພັນ ນຳຫ້ອງການສ່ວຍສາອາກອນ ຫລືຈຸດບໍລິການ ເພື່ອຮັບໃບຢັ້ງຢືນການລົງທະບຽນ ແລະຈ່າຍຄ່າທຳນຽມທາງ ຮັບໃບວິງກົມ, ທັງນີ້ແມ່ນເພື່ອນສະດວກ ແລະປະຢັດເວລາ ໂດຍທ່ານບໍ່ຈຳເປັນໃຊ້ເວລາໃນການລໍຖ້າດົນ. ຊຶ່ງທ່ານສາມາດເຂົ້າໄປທີ່ເວບໄຊສ໌ https://laoetax.com/ ເພື່ອປ້ອນຂໍ້ມູນຍານພາຫະນະຂອງທ່ານຕາມ ແບບຟອມ ແລະຄຳແນະນຳຢູ່ໃນລະບົບອິນເຕີເນັດ (E-service) ແລ້ວຫລັງຈາກນັ້ນລະບົບຈະສົ່ງອີເມລ໌ ຄືນຫາທ່ານເພື່ອໃຫ້ທ່ານມາພົວພັນເອົາໃບເສຍຄ່າທຳນຽມທາງນຳເຈົ້າໜ້າທີ່ສ່ວຍສາອາກອນບ່ອນທີ່ທ່ານ ສະດວກ.

- ❖ ສຳລັບບັນດາທ່ານທີ່ລົງທະບຽນຜ່ານ E-service ຈຳໄດ້ຮັບລະຫັດປະຈຳຕົວຜູ້ເຂົ້ານຳໃຊ້ລະບົບ LETS ID ເພື່ອກວດກາສະຖານະເສຍອາກອນ ແລະຄ່າທຳນຽມໃນແຕ່ລະປີ (ລະບົບຈະສ້າງໃຫ້ ພາຍຫລັງລົງທະບຽນຜ່ານ E-service )

- ➢ **ສຳລັບການລົງທະບຽນພາຫະນະໃໝ່**: ພາຫະນະຈະຖືກລົງທະບຽນໃນເວລາດຽວກັນກັບ ການຍື່ນເສຍຄ່າ ທຳນຽມຂຶ້ນທະບຽນພາຫະນະ, ຄ່າທຳນຽມທາງ, ຄ່າທຳນຽມກວດກາເຕັກນິກຢູ່ກອງຄຸ້ມຄອງພາຫະນະ ໂດຍເຈົ້າໜ້າທີ່ຈະເປັນຜູ້ປ້ອນຂໍ້ມູນບັນທຶກເຂົ້າລະບົບ ກ່ອນອອກໃບສັ່ງມອບຄ່າທຳນຽມຕ່າງໆນັ້ນ.

**ໝາຍເຫດ:**

- ການລົງທະບຽນຍານພາຫະນະນຳຂະແໜງອາກອນແມ່ນລົງພຽງຄັ້ງດຽວ ແລະທ່ານ ສາມາດເຂົ້າພົວພັນ ນຳຫ້ອງການອາກອນ ແລະຈຸດບໍລິການ ອ້ອມຂ້າງນະຄອນຫຼວງ ເພື່ອປັບປຸງຂໍ້ມູນຂອງພາຫະນະ ແລະ ເຈົ້າຂອງໄດ້ທຸກເວລາ ທ່ານຫາກມີການປ່ຽນແປງຂໍ້ມູນ;
- ບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ພາກທຸລະກິດ ທີ່ເຮັດວຽກປະຈຳ ບໍ່ຄ່ອຍມີເວລາພວກເຮົາ ແນະນຳທ່ານລົງທະບຽນຜ່ານລະບົບ E-service ລ່ວງໜ້າ ແລະ/ຫຼື ເຂົ້າພົວພັນຢູ່ສູນບໍລິການໂພນໄຊ ເນື່ອງຈາກພວກເຮົາຂະຫຍາຍເວລາເຮັດວຽກ ໄລຍະໜຶ່ງເພື່ອສ້າງຄວາມສະດວກໃຫ້ທ່ານ ຕາມວັນແລະ ເວລາທີ່ໄດ້ກ່າວຂ້າງເທິງ.
- ມີຄຳຖາມ ຫຼືຂໍ້ສົງໃສທ່ານ ສາມາດໂທສອບຖາມໝາຍເລກ 030-5775789